ໄວໜຸ່ມຮຽກຮ້ອງການລົງທຶນອັນຮີບດ່ວນເພື່ອການຂັບເຄື່ອນການພັດທະນາແບບຍືນຍົງ

ນະຄອນຫຼວງວຽງຈັນ, 8 ພະຈິກ 2022 - ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະ ກະຊວງ ແຜນການ ແລະ ການລົງທຶນ ໄດ້ເປີດຕົວ ບົດລາຍງານການພັດທະນາມະນຸດແຫ່ງຊາດ (NHDR) ເຊິ່ງໄດ້ສຸມໃສ່ກ່ຽວ ກັບ “ໄວໜຸ່ມຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ”. ສປປ ລາວ ເປັນໜຶ່ງໃນປະເທດທີ່ມີປະຊາກອນໜຸ່ມຂະຫຍາຍຕົວ ໄວທີ່ສຸດໃນອາຊີອາຄະເນ ແລະ ກຳລັງມີການຫັນປ່ຽນດ້ານສັດສ່ວນປະຊາກອນ. ໃນນັ້ນຈຳນວນປະຊາກອນຜູ້ ອອກແຮງງານ (ອາຍຸ 20-64 ປີ) ທີ່ເປັນຜູ້ເສຍພາສີ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ໄດ້ມີການ ຂະຫຍາຍຕົວເພີ່ມຂຶ້ນຫຼາຍກວ່າ ຈຳນວນປະຊາກອນຜູ້ເອື່ອຍອີງແຮງງານ (ອາຍຸ 0-19 ປີ ແລະ ອາຍຸ 65ປີ ຂຶ້ນໄປ) ທີ່ ຈຳເປັນຕ້ອງໄດ້ອາໄສການເບິ່ງແຍງດູແລ ແລະ ການບໍລິການອື່ນໆ. ການຫັນປ່ຽນດ້ານປະຊາກອນດັ່ງກ່າວ ແມ່ນເປັນ ການລະໂອກາດທີ່ສຳຄັນສຳລັບ ສປປ ລາວ ໃນການສ້າງປະໂຫຍດຈາກໂຄງສ້າງປະຊາກອນໜຸ່ມ ແລະ ຈະສາມາດເປັນໄປ ໄດ້ກໍຕໍ່ເມື່ອປະຊາກອນຜູ້ອອກແຮງງານ ມີສຸຂະພາບແຂງແຮງ,ໄດ້ຮັບການສຶກສາ,ມີອາຊີບໝັ້ນຄົງ ແລະ ໄດ້ຮັບການ ໂອກາດໃນການມີສ່ວນຮ່ວມ ເຂົ້າໃນການຕັດສິນໃຈບັນຫາສຳຄັນ ທີ່ມີຜົນຕໍ່ການດຳລົງຊີວິດຂອງພວກເຂົາ. ເຊິ່ງ ປະຊາກອນຜູ້ອອກແຮງງານຮຸ່ນນີ້ ຈະກາຍເປັນຜູ້ຊຸກຍູ້ ແລະ ປະກອບສ່ວນເຂົ້າໃນ ການຂະຫຍາຍຕົວຂອງເສດຖະກິດ ແລະ ການພັດທະນາແບບຍືນຍົງໃນອະນາຄົດ.

ບົດລາຍງານ ການພັດທະນາມະນຸດແຫ່ງຊາດ ໄດ້ຄົ້ນຄວ້າກ່ຽວກັບສະຖານະຂອງຊາວໜຸ່ມ ໃນ ສປປ ລາວ ໃນປັດຈຸບັນ ຕໍ່ບັນຫາສິ່ງທ້າທາຍທີ່ພວກເຂົາພົບພໍ້, ບັນດາໂອກາດທີ່ພວກເຂົາໄດ້ຮັບ ແລະ ຄວາມມຸ່ງມາດປາຖະໜາຂອງພວກເຂົາຕໍ່ ອະນາຄົດ. ບົດລາຍງານໄດ້ເກັບກຳເອົາສະພາບການດຳລົງຊີວິດຂອງໄວໜຸ່ມໃນ ສປປ ລາວ ເຊິ່ງລວມມີ ບັນດາໄວໜຸ່ມ ທີ່ເປັນກຸ່ມຄົນດ້ອຍໂອກາດເຊັ່ນ: ໄວໜຸ່ມຍິງ, ໄວໜຸ່ມຍິງທີ່ມີຄວາມພິການ,ໄວໜຸ່ມທີ່ເປັນແຮງງານເຄື່ອນຍ້າຍ,ໄວໜຸ່ມ ຊົນເຜົ່າ, ໄວໜຸ່ມໃນກຸ່ມຄົນຫຼາກຫຼາຍທາງເພດ ແລະ ໄວໜຸ່ມທີ່ມາຈາກເຂດຊົນນະບົດ ແລະ ຫ່າງໄກຊອກຫຼີກ.

ບົດລາຍງານໄດ້ມີຂໍ້ສະເໜີແນະໃນແຕ່ລະຂົງເຂດທີ່ສຳຄັນເຊັ່ນ: ການຈ້າງງານ, ການສຶກສາ, ສຸຂະພາບ ແລະ ການມີ ສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນຕ່າງໆ ໂດຍມີຈຸດປະສົງສົ່ງເສີມບົດບາດຂອງໄວໜຸ່ມ ຜູ້ຂັບເຄື່ອນການ ພັດທະນາແບບຍືນຍົງ.

ໃນການເປີດຕົວບົດລາຍງານຄັ້ງນີ້ ແມ່ນຮ່ວມເປັນປະທານງານໂດຍ ທ່ານ ສະຖາບັນດິດ ອິນສີຊຽງໃໝ່ ຮອງ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ນາງ ຣິຄາດາ ຣິເກ້ ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ພ້ອມດ້ວຍ ບັນດາຄູ່ຮ່ວມປຶກສາຫາລື ລວມມີ ຊາວໜຸ່ມ, ລັດຖະບານ, ບັນດາໜ່ວຍງານຂອງ ອົງການ ສະຫະປະຊາຊາດ, ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສັງຄົມ ເຊິ່ງທີ່ຜ່ານມາ ມີໄວໜຸ່ມຫຼາຍກວ່າ 7,000 ຄົນ ໄດ້ປະກອບສ່ວນເຂົ້າໃນການສຳຫຼວດແຫ່ງຊາດໃນຄັ້ງນີ້ອີກດ້ວຍ.

ທ່ານ ປອ ສະຖາບັນດິດ ອິນສີຊຽງໃໝ່ ໄດ້ກ່າວເປີດງານວ່າ: “ບົດລາຍງານໄດ້ສ່ອງແສງໃຫ້ເຫັນເຖິງ ຄວາມເອົາໃຈໃສ່ ຂອງລັດຖະບານໃນການສົ່ງເສີມໄວໜຸ່ມ ພ້ອມທັງຊີ້ໃຫ້ເຫັນເຖິງຄວາມຈຳເປັນອັນຮີບດ່ວນ ໃນການສ້າງຄວາມເຂັ້ມ ແຂງການລົງທຶນຕໍ່ກັບພວກເຂົາ ເພື່ອໃຫ້ເກີດຜົນປະໂຫຍດຈາກໂຄງສ້າງປະຊາກອນໜຸ່ມ. ບົດລາຍງານສະບັບນີ້ໄດ້ໃຫ້

ຂໍ້ສະເໜີແນະທີ່ຊັດເຈນ ແລະ ຮຽກຮ້ອງໃຫ້ມີການຮ່ວມມືທີ່ເຂັ້ມແຂງ ໃນໄລຍະທົດສະວັດທີ່ກຳລັງຈະມາເຖິງນີ້ ເພື່ອ ສາມາດບັນລຸເປົ້າໝາຍບູລິມະສິດທີ່ສຳຄັນຂອງ ສປປ ລາວ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9.”

ທ່ານ ນາງ ອິຄາດ້າ ອິເກ ໄດ້ຍົກໃຫ້ເຫັນເຖິງບົດລາຍງານການພັດທະນາມະນຸດສາກົນວ່າ: “ໃນໄລຍະເວລາແຫ່ງຄວາມບໍ່ ແນ່ນອນນີ້ ມີສິ່ງໜຶ່ງທີ່ຊັດເຈນກໍຄື ຊາວໜຸ່ມຈະເຕີບໃຫຍ່ຂຶ້ນ ແລະ ກາຍເປັນຜູ້ສືບທອດໂລກໜ່ວຍນີ້ ທີ່ເຮົາໄດ້ສ້າງຂຶ້ນ ແລະ ໃນມື້ໜຶ່ງເຮົາຕ້ອງໄດ້ຈາກມັນໄປ. ໃນຕອນນີ້ ມັນແມ່ນໂອກາດທີ່ສຳຄັນຂອງພວກເຮົາ ທີ່ຕ້ອງໄດ້ເຮັດວຽກຮ່ວມ ກັບໄວໜຸ່ມ ເພື່ອຄົ້ນຫາແນວທາງແກ້ໄຂບັນຫາການພັດທະນາທີ່ພວກເຮົາກຳລັງພົບພໍ້ຢູ່. ໄວໜຸ່ມຕ້ອງໄດ້ມີສ່ວນຮ່ວມ ເຂົ້າໃນການຕັດສິນໃຈ ເພື່ອກຳນົດຈຸດໝາຍປາຍທາງຂອງຕົນເອງ. ພວກເຮົາສາມາດປະກອບສ່ວນໃນການຂະຫຍາຍ ສິດ ແລະ ອິດສະຫຼະພາບຂອງພວກເຂົາ ໂດຍການນຳໃຊ້ແນວທາງດ້ານການພັດທະນາມະນຸດ ເພື່ອຊ່ວຍນຳທາງໃຫ້ພວກ ເຮົາສາມາດບັນລຸເປົ້າໝາຍ ແລະ ໄດ້ຮັບໝາກຜົນໃນໄລຍະເວລາທີ່ບໍ່ແນ່ນອນນີ້. ”

ບົດລາຍງານການພັດທະນາມະນຸດແຫ່ງຊາດໄດ້ສະແດງໃຫ້ເຫັນວ່າ ໄວໜຸ່ມລາວຍັງບໍ່ທັນສາມາດສະແດງສັກກາຍະພາບ ໄດ້ຢ່າງເຕັມທີ່ເທື່ອ ແລະ ດ້ວຍສະພາບການທີ່ຍັງຄົງເຊື່ອງການລະໂອກາດເຫຼົ່ານັ້ນໄວ້ ຈະເຮັດໃຫ້ ສປປ ລາວ ບໍ່ສາມາດ ບັນລຸການສ້າງຜົນປະໂຫຍດຈາກໂຄງສ້າງປະຊາກອນໜຸ່ມດັ່ງກ່າວໄດ້. ນອກຈາກນີ້ ບົດລາຍງານກໍຍັງໄດ້ຊີ້ໃຫ້ເຫັນວ່າ ໄວໜຸ່ມຍັງຂາດທັກສະຄວາມຮູ້ທີ່ສຳຄັນໃນການປະກອບສ່ວນການພັດທະນາເສດຖະກິດອີກດ້ວຍ.ຜົນຂອງການ ຄົ້ນຄວ້າບົດລາຍງານສະບັບນີ້ແມ່ນຍັງຊີ້ໃຫ້ເຫັນວ່າ ສປປ ລາວ ຍັງມີຄວາມຂາດເຂີນ ແລະ ຄວາມບໍ່ເທົ່າທຽມກັນ. ຄວາມສ່ຽງທາງດ້ານສຸຂະພາບຂອງແມ່ຍິງຖືພາໃນໄວຈະເລີນພັນ ແລະ ສຸຂະພາບທາງຈິດ ແມ່ນເປັນສິ່ງທ້າທາຍສຳຄັນ ທີ່ເປັນອຸປະສັກເຮັດໃຫ້ໄວໜຸ່ມຍິງ ແລະ ຊາຍ ບໍ່ສາມາດເພີ່ມພູນທັກສະຄວາມຮູ້ຄວາມສາມາດຂອງພວກເຂົາໄດ້. ສປປ ລາວ ໄດ້ຮັບຜົນກະທົບອັນທັບຊ້ອນໃນໄລຍະເວລາທີ່ຜ່ານມາ ລວມທັງໄພນ້ຳຖ້ວມ, ພະຍາດລະບາດ ໂຄວິດ-19 ແລະ ຜົນກະທົບຈາກສົງຄາມທີ່ປະເທດ ອູເກລນ ເຊິ່ງເຮັດໃຫ້ບໍ່ສາມາດບັນລຸເປົ້າໝາຍແຜນການພັດທະນາຕາມທີ່ວາງໄວ້ໄດ້.

ບົດລາຍງານການພັດທະນາມະນຸດແຫ່ງຊາດ ໄດ້ເນັ້ນໜັກເຖິງການສະໜັບສະໜຸນການລົງທຶນຕໍ່ການພັດທະນາທັກສະ ເພື່ອຄວາມພ້ອມໃນອະນາຄົດ, ການເບິ່ງແຍງສຸຂະພາບທີ່ຕອບສະໜອງຄວາມຕ້ອງການສະເພາະ ຂອງໄວໜຸ່ມ ເຊິ່ງລວມ ທັງ ບັນຫາດ້ານສຸຂະພາບຈິດ ແລະ ການສ້າງຄວາມເຂັ້ມແຂງໃຫ້ພວກເຂົາມີສ່ວນຮ່ວມໃນການຕັດສິນໃຈບັນຫາສຳຄັນ ຕ່າງໆ. ກຸ່ມໄວໜຸ່ມທີ່ດ້ອຍໂອກາດ ແມ່ນເປັນກຸ່ມເປົ້າໝາຍສຳຄັນທີ່ບັນດາການລົງທຶນເຫຼົ່ານີ້ຕ້ອງໄດ້ເອົາໃຈໃສ່ໃຫ້ຫຼາຍ ທີ່ສຸດ. ບົດລາຍງານສະບັບນີ້ ຍັງໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນອັນຮີບດ່ວນທີ່ຈຳເປັນຕ້ອງໄດ້ມີການພັດທະນາຄວາມ ຮູ້ຄວາມສາມາດຂອງໄວໜຸ່ມຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ ແລະ ຮັບປະກັນວ່າໂອກາດທີ່ສຳຄັນໃນຮອບທົດສະ ວັດຄັ້ງນີ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ພາຍໃຕ້ການມີສ່ວນຮ່ວມຈາກທຸກພາກສ່ວນ.

ຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່

ນາງ ອັກສອນທິບ ສົມວໍຣະຈິດ, ຜູ້ຮັບຜິດຊອບຝ່າຍການສື່ສານ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP)

ອີເມວ: aksonethip.somvorachit@undp.org

ເບີໂທຕິດຕໍ່: 020 55021550